# Shanxi University Prospectus

Application Information for International Students

2025 Entry

Welcome to Shanxi University

# ປະກາດທຶນ ປີ 2025

**A34: ທຶນຮຽນປະລິນຍາຕີ ກຽມພາສາ 1 ປີ + ເຂົ້າສາຍ 4 ປີ**

ຊື່ໂຮງຮຽນ: ມະຫາວິທະຍາໄລຊານຊີ 山西大学 Shanxi University ຕັ້ງຢູ່ໃຈກາງເມືອງໄທ້ຢວນ ເທດສະບານແຂວງຊານຊີ ຕິດກັບນະຄອນຫຼວງປັກກິ່ງ ເປັນມະຫາວິທະຍາໄລອັນດັບ 1 ຂອງແຂວງ ແລະ ຈັດຢູ່ໃນແຖວໜ້າຂອງປະເທດ, ມີປະຫວັດຍາວນານເຖິງ 121 ປີ, ມີພື້ນທີ່ວິທະຍາເຂດກວ້າງເຖິງ 2.005.333 ຕາລາງແມັດ, ພື້ນທີ່ກໍ່ສ້າງຕຶກອາຄານກວ້າງໃຫຍ່ເຖິງ 350.853 ຕາລາງແມັດ, ພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກຄົບຊຸດສວຍງາມທັນສະໄໝ, ມະຫາວິທະຍາໄລປະກອບມີ 27 ຄະນະ, ເປີດຫຼັກສູດການຮຽນການສອນເໜືອປະລິນຍາເອກ 14 ສາຂາ, ຫຼັກສູດປະລິນຍາເອກ 19 ສາຂາ, ປະລິນຍາໂທ 59 ສາຂາ ແລະ ປະລິນຍາຕີ 87 ສາຂາ, ປັດຈຸບັນ ມີນັກສຶກສາທີ່ກຳລັງສຶກສາຢູ່ທັງໝົດ 35.000 ກວ່າຄົນ, ມີຄູອາຈານສອນທັງໝົດ 3.265 ຄົນ, ໃນນີ້ມີສາດສະດາຈານ ທີ່ໄດ້ຮັບນາມມະຍົດຄູສອນຊ່ຽວຊານຂັ້ນສູງລະດັບຊາດເຖິງ 1.228 ຄົນ. ມີການພົວພັນຮ່ວມມືກັບນາໆຊາດຫຼາຍກວ່າ 50 ມະຫາວິທະຍາໄລ ແລະ ອົງການຈັດຕັ້ງສາກົນ.




**ກຽມພາສາຈີນ 1 ປີ ເຊິ່ງຜູ້ຮຽນໄດ້ຮັບເງື່ອນໄຂດັ່ງນີ້:**

1. ຄ່າຮຽນຟຣີ 1 ປີ
2. ຄ່າຫໍພັກຟຣີ 1 ປີ
3. ວີຊ່າເຂົ້າປະເທດຟຣີ 1 ຄັ້ງ
4. ຄ່າເດີນທາງຟຣີ 1 ຖ້ຽວ, ໄປສົ່ງຮອດໂຮງຮຽນ, ນຳພາລົງທະບຽນ, ດູແລຕະຫຼອດໄລຍະຮຽນ.
5. ບໍ່ທັນມີເບ້ຍລ້ຽງ.

**✳ ຂັ້ນສາຍປະລິນຍາຕີ 4 ປີ ເຊິ່ງຜູ້ຮຽນໄດ້ຮັບເງື່ອນໄຂດັ່ງນີ້:**

**ປະເພດທຶນ:** ປະເພດ A: ມີ HSK4-220 ຄະແນນຂຶ້ນໄປ, ຄະແນນສຳພາດຂຶ້ນສາຍ 80 ຄະແນນຂຶ້ນໄປ, ຄຸນສົມບັດດີ ບໍ່ເຮັດຜິດລະບຽບຂອງໂຮງຮຽນ ຈະໄດ້ທຶນຂຶ້ນສາຍປະລິນຍາຕີ 4 ປີ: ຄ່າຮຽນຟຣີ, ຄ່າພໍພັກຟຣີ, ຄ່າລົງທະບຽນຟຣີ, ມີເງິນເດືອນ 750 ຢວນ/ເດືອນ.

ປະເພດ B: ມີ HSK4-200 ຄະແນນຂຶ້ນໄປ, ຄະແນນສຳພາດຂຶ້ນສາຍ 70 ຄະແນນຂຶ້ນໄປ, ຄຸນສົມບັດດີ ບໍ່ເຮັດຜິດລະບຽບຂອງໂຮງຮຽນ ຈະໄດ້ທຶນຂຶ້ນສາຍປະລິນຍາຕີ 4 ປີ: ຄ່າຮຽນຟຣີ, ຄ່າພໍພັກຟຣີ, ຄ່າລົງທະບຽນຟຣີ, ບໍ່ມີເບ້ຍລ້ຽງ.

ປະເພດ C: ຖ້າຄະແນນ HSK4 ບໍ່ເຖິງ 200 ຄະແນນ ຫຼື ຄະແນນສຳພາດຂຶ້ນສາຍບໍ່ເຖິງ 70 ຄະແນນ ຈະໄດ້ຈ່າຍຄ່າຮຽນ, ຈ່າຍຄ່າພໍພັກດ້ວຍທຶນຕົນເອງ ກຽມພາສາຕື່ມອີກ 1 ປີ ປີຖັດໄປ ຈຶ່ງຈະໄດ້ສຳພາດຂຶ້ນສາຍ.

**ໝາຍເຫດ:** ຜູ້ທີ່ມັກຫຼິ້ນ, ມັກທ່ຽວ, ມັກກິນເຫຼົ້າເບຍ, ມັກເຮຮາປາຕີ້ ແມ່ນແນະນຳບໍ່ໃຫ້ສະໝັກໄປຮຽນຢູ່ມະຫາວິທະຍາໄລນີ້, ເຖິງຈະຮຽນເກັ່ງລະດັບໃດກໍຕາມ ຖ້າບໍ່ປະຕິບັດຕາມລະບຽບຂອງມະຫາວິທະຍາໄລຢ່າງເຂັ້ມງວດ ແມ່ນຈະຖືກໄລ່ອອກ, ສິ່ງທີ່ສຳຄັນທີ່ສຸດແມ່ນຄຸນສົມບັດຕ້ອງດີ.

- **ສາຂາຮຽນ:** **ການຄ້າສາກົນ, ບໍລິຫານທຸລະກິດ, ບໍລິຫານການທ່ອງທ່ຽວ, ພາສາຈີນ, ນັກຂ່າວ, ແລະ ໄອທີ.**
- **ເງື່ອນໄຂຜູ້ສະໝັກ:** ເປັນນັກຮຽນ-ນັກສຶກສາ, ພະນັກງານ ແລະ ບຸກຄົນທົ່ວໄປ ທີ່ຖືສັນຊາດລາວ, ອາຍຸ 18-25 ປີ, ສຸຂະພາບແຂງແຮງ, ຜູ້ທີ່ບໍ່ເຄີຍຮຽນພາສາຈີນມາກ່ອນກໍສະໝັກໄດ້ ເລີ່ມຮຽນຂັ້ນພື້ນຖານ, ຈົບ ມ.7 ຫຼື ກຳລັງຮຽນ ມ.7 ຂຶ້ນໄປຈຶ່ງສະໝັກໄດ້.
- **ໂຄຕ້າ:** 30 ທຶນ
- ໝົດເຂດສະໝັກ: 30.6.2025 ເຂົ້າຮຽນ: ເດືອນ 9-10.2025
- ຄ່າບໍລິການສະໝັກທຶນ:
- **ເອກະສານ:** ເອກະສານທີ່ຕ້ອງປະກອບ ແລະ ຂັ້ນຕອນການສະໝັກ ມີຂໍ້ແນະນຳຕ່າງຫາກ.






山西大學




山西大學


圖書館








安全出口
EXIT




安全离校


OTIS

09

3F


著名经济学家


卫生间
Toilet
Men
盥洗室


盥洗室


支付账号，请您耐心等待。
客服电话：18135178030
02
01
















4

